**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ລັດຖະບານ** ເລກທີ 555 /ລບ
ນະຄອນຫຼວງວຽງຈັນ, ວັນທີ 04 / 09 / 25

# ດຳລັດ
# ວ່າດ້ວຍ ການປັບໃໝ ແລະ ມາດຕະການອື່ນຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ພາຍອາວຸດທຳລາຍລ້າງຜານ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 64/ສພຊ, ລົງວັນທີ 1 ກໍລະກົດ 2024;
- ອີງຕາມໜັງສືສະເໜີ ຂອງທະນາຄານແຫ່ງ ສປປ ລາວ ສະບັບເລກທີ 123/ທຫລ, ລົງວັນທີ 22 ພຶດສະພາ 2025.

**ລັດຖະບານ ອອກດຳລັດ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການປັບໃໝ ແລະ ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ພາຍອາວຸດທຳລາຍລ້າງຜານ ເພື່ອເປັນບ່ອນອີງໃຫ້ແກ່ ອົງການຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ໃນການປັບໃໝ ແລະ ການປະຕິບັດມາດຕະການຕໍ່ຜູ້ລະເມີດ ຢ່າງຖືກຕ້ອງ, ເຂັ້ມງວດ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ແນໃສ່ຕ້ານ ການຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ພາຍອາວຸດທຳລາຍລ້າງຜານ ທຸກຮູບແບບ, ເຮັດໃຫ້ລະບົບເສດຖະກິດ-ການເງິນ ມີຄວາມເຂັ້ມແຂງ, ໝັ້ນຄົງ, ສັງຄົມ ມີຄວາມ ສະຫງົບ ແລະ ລະບຽບຮຽບຮ້ອຍ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ການປັບໃໝ ແລະ ມາດຕະການອື່ນ**

ການປັບໃໝ ແມ່ນ ມາດຕະການທາງດ້ານການເງິນ ທີ່ນຳໃຊ້ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ ແລະ ການແຜ່ພາຍອາວຸດທຳລາຍລ້າງຜານ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຕາມອັດຕາຄ່າປັບໃໝ ທີ່ໄດ້ກຳນົດໄວ້ ໃນດຳລັດສະບັບນີ້.

ມາດຕະການອື່ນ ແມ່ນ ມາດຕະການທີ່ນຳໃຊ້ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ ແລະ ການແຜ່ພາຍອາວຸດທຳລາຍລ້າງຜານ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ດ້ວຍການ ກ່າວເຕືອນ, ໂຈະການນຳໃຊ້, ຍຸບເລີກ ແລະ ລຶບລ້າງໃບທະບຽນວິສາຫະກິດ, ໂຈະການເຄື່ອນໄຫວທຸລະກິດ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

**1. ຫົວໜ່ວຍທີ່ມີໜ້າທີ່ລາຍງານ** ໝາຍເຖິງ ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ, ຜູ້ໃຫ້ບໍລິການຊຳລະເງິນ, ບໍລິສັດປະກັນໄພ, ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ກອງທຶນເພື່ອການລົງທຶນ, ຜູ້ໃຫ້ບໍລິການ ຊັບສິນເໝືອນຈິງ, ທຸລະກິດ ຊື້ ຂາຍອະສັງຫາລິມະຊັບ, ທຸລະກິດ ຊື້ ຂາຍ ວັດຖຸມີຄ່າ, ວິສາຫະກິດບັນຊີ, ວິສາຫະກິດກວດສອບ, ທຸລະກິດກາຊີໂນ, ວິສາຫະກິດກົດໝາຍ, ທະນາຍຄວາມ, ຫົວໜ່ວຍ ແລະ ບຸກຄົນອື່ນ ຕາມການກຳນົດຂອງຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

**2. ອົງການຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານ** ໝາຍເຖິງ ອົງການຈັດຕັ້ງລັດ ທີ່ມີ ສິດ ແລະ ໜ້າທີ່ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວຂອງ ຫົວໜ່ວຍທີ່ມີໜ້າລາຍງານ ເປັນຕົ້ນ ທະນາຄານແຫ່ງ ສປປ ລາວ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ, ກະຊວງຍຸຕິທຳ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ສຳນັກງານຂໍ້ມູນຕ້ານການຟອກເງິນ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 4 ຫຼັກການກ່ຽວກັບການປັບໃໝ ແລະ ມາດຕະການອື່ນ**

ການປັບໃໝ ແລະ ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ;
2. ຄຸ້ມຄອງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນຄວາມ ເປັນລະບຽບຮຽບຮ້ອຍ, ວ່ອງໄວ, ມີປະສິດທິພາບ ແລະ ປະສິດທິຜົນສູງ;
4. ຮັບປະກັນການປະຕິບັດອັດຕາຄ່າປັບໃໝ ເປັນເອກະພາບ, ຖືກຕ້ອງ, ໂປ່ງໃສ, ຍຸຕິທຳ, ວ່ອງໄວ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ລັດວິສາຫະກິດໄປສະນີ ແລະ ນິຕິບຸກຄົນ ທີ່ກ່ຽວຂ້ອງ ທີ່ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ ຢູ່ ສປປ ລາວ.

## ໝວດທີ 2
## ການປັບໃໝ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

**ມາດຕາ 6 ການລະເມີດຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ**

ການລະເມີດ ກົດໝາຍ ແລະ ລະບຽບການ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ລວມທັງພະນັກງານ ແລະ ຜູ້ບໍລິຫານ ກ່ຽວກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ມີ ດັ່ງນີ້:

1. ບໍ່ຄວບຄຸມພາຍໃນ;
2. ບໍ່ ປະເມີນ ແລະ ບໍລິຫານ ຄວາມສ່ຽງ;
3. ບໍ່ຊອກຮູ້ລູກຄ້າ;
4. ບໍ່ເອົາໃຈໃສ່ລູກຄ້າ;
5. ບໍ່ເກັບກຳຂໍ້ມູນກ່ຽວກັບລູກຄ້າ;
6. ບໍ່ປະຕິບັດ ຫຼັກການພົວພັນກັບບຸກຄົນທີ່ມີສະຖານະພາບທາງການເມືອງ;

7. ບໍ່ປະຕິບັດ ຫຼັກການພົວພັນກັບທະນາຄານຕົວແທນ;

8. ບໍ່ເກັບກໍາຂໍ້ມູນການໂອນເງິນ;

9. ບໍ່ເກັບຮັກສາຂໍ້ມູນ;

10. ບໍ່ປະຕິບັດ ພັນທະໃນການລາຍງານ;

11. ບໍ່ປະຕິບັດ ພັນທະໃນການລາຍງານທຸລະກໍາທີ່ສົງໄສ;

12. ບໍ່ປະຕິບັດ ການນໍາໃຊ້ມາດຕະການຊົ່ວຄາວ;

13. ບໍ່ຮັກສາຄວາມລັບຂອງການລາຍງານ;

14. ບໍ່ກວດກາລູກຄ້າຂອງຕົນ;

15. ບໍ່ລາຍງານການ ກວດພົບ ຫຼື ພົບເຫັນ ທຶນ;

16. ພົວພັນກັບ ທະນາຄານ ຫຼື ສະຖາບັນການເງິນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ບໍ່ມີຕົວຕົນ;

17. ພົວພັນກັບ ທະນາຄານຢູ່ປະເທດທີ່ບໍ່ມີກົດໝາຍກ່ຽວກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

18. ເປີດບັນຊີບໍ່ລະບຸນາມ ຫຼື ເປີດບັນຊີ ທີ່ເປັນລະຫັດ;

19. ບໍລິການ, ເຮັດທຸລະກໍາ ຫຼື ສ້າງສາຍພົວພັນທຸລະກິດ ກັບລູກຄ້າທີ່ປົກປິດຊື່ນາມສະກຸນທີ່ແທ້ຈິງ;

20. ບໍລິການລູກຄ້າ ທີ່ມີ ຂໍ້ມູນ ຫຼື ມີປະຫວັດບໍ່ຈະແຈ້ງ;

21. ບໍລິການເປີດບັນຊີ ຫຼື ອອກບັດ ເອເລັກໂຕຣນິກ ທີ່ລູກຄ້າສາມາດເອົາໃຫ້ຜູ້ອື່ນເຄື່ອນໄຫວໂດຍບໍ່ຖືກຕ້ອງຕາມກົດໝາຍ;

22. ເຮັດທຸລະກິດ ຫຼື ທຸລະກໍາ ກັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

23. ບໍ່ໃຫ້ການຮ່ວມມືກັບຄະນະກວດກາ ວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

24. ການລະເມີດແຈ້ງການຂອງສໍານັກງານຂໍ້ມູນຕ້ານການຟອກເງິນ ແລະ ອົງການຄຸ້ມຄອງ.

## ມາດຕາ 7 ການລະເມີດຂອງວິສາຫະກິດໄປສະນີ

ການລະເມີດ ກົດໝາຍ ແລະ ລະບຽບການ ຂອງວິສາຫະກິດໄປສະນີ ກ່ຽວກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ມີ ດັ່ງນີ້:

1. ບໍ່ກວດກາລູກຄ້າຂອງຕົນ;

2. ບໍ່ລາຍງານການ ກວດພົບ ຫຼື ພົບເຫັນ ທຶນ;

3. ບໍ່ນໍາໃຊ້ມາດຕະການຊົ່ວຄາວ ຕໍ່ທຶນ ທີ່ກວດພົບ ຫຼື ພົບເຫັນ;

4. ພົວພັນກັບ ທະນາຄານ ຫຼື ສະຖາບັນການເງິນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ບໍ່ມີຕົວຕົນ;

5. ພົວພັນກັບທະນາຄານ ຢູ່ປະເທດທີ່ບໍ່ມີນິຕິກໍາກ່ຽວກັບ ການ ກັກ, ຍຶດ ແລະ ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

6. ເຮັດທຸລະກິດ ຫຼື ທຸລະກໍາ ກັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

## ມາດຕາ 8 ການລະເມີດຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ

ການລະເມີດ ກົດໝາຍ ແລະ ລະບຽບການ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົວພັນກັບວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ມີ ດັ່ງນີ້:

1. ບໍ່ລາຍງານການພົບເຫັນການເຄື່ອນໄຫວຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ ຫຼື ຜູ້ທີ່ພົວພັນກັບ ການກໍ່ການຮ້າຍ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

2. ບໍ່ຢຸດຕິການເຄື່ອນໄຫວຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ ຫຼື ຜູ້ທີ່ພົວພັນກັບ ການກໍ່ການຮ້າຍ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

3. ໃຫ້ການຊ່ວຍເຫຼືອຜູ້ທີ່ພົວພັນກັບ ການກໍ່ການຮ້າຍ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

4. ພົວພັນກັບ ທຶນ ຫຼື ຊັບສິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

5. ເຄື່ອນໄຫວ ຫຼື ດຳເນີນການ ກ່ຽວກັບທຶນ ໂດຍທີ່ຮູ້ວ່າທຶນນັ້ນ ໃຜເປັນເຈົ້າຂອງ, ຖືກຄວບຄຸມ ຫຼື ໄດ້ຖືກຄອບຄອງ ທັງທາງກົງ ຫຼື ທາງອ້ອມ ທັງໝົດ ຫຼື ບາງສ່ວນ ຫຼື ກະທຳໃນນາມ ຫຼື ຕາມຄຳສັ່ງຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

6. ເຮັດໃຫ້ ທຶນ ຫຼື ຊັບສິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ປ່ຽນຮູບ, ພ້ອມນຳໃຊ້ ໂດຍທາງກົງ ຫຼື ທາງອ້ອມ, ທັງໝົດ ຫຼື ບາງສ່ວນ;

7. ພົວພັນທຸກຮູບແບບ ກັບຜູ້ທີ່ພົວພັນກັບການກໍ່ການຮ້າຍ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

8. ບໍ່ ລະງັບ ຫຼື ກັກ ທຶນ ທີ່ພົວພັນກັບ ການກໍ່ການຮ້າຍ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

9. ບໍ່ ລາຍງານ ການພົບເຫັນ ຫຼື ສົງໄສທຸລະກຳ ຫຼື ການເຄື່ອນໄຫວ ທີ່ກ່ຽວຂ້ອງກັບການກໍ່ການຮ້າຍ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

10. ລາຍງານຂໍ້ມູນທີ່ບໍ່ມີຄວາມຈິງ ກ່ຽວກັບການພົບເຫັນ ຫຼື ມີຄວາມສົງໄສ ຕໍ່ທຸລະກຳ ຫຼື ການເຄື່ອນໄຫວ ທີ່ກ່ຽວຂ້ອງ ຫຼື ອາດຈະກ່ຽວຂ້ອງ ກັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ຢູ່ໃນບັນຊີລາຍຊື່ ຫຼື ທີ່ພົວພັນກັບ ການກໍ່ການຮ້າຍ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

**ມາດຕາ 9 ອັດຕາການປັບໃໝ ຫົວໜ່ວຍທີ່ມີໜ້າທີ່ລາຍງານ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ໄດ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມທີ່ກຳນົດໄວ້ໃນມາດຕາ 6 ຂໍ້ 1, 2, 3, 4, 5, 6, 7, 8, 9, 10, 11, 13, 14, 15, 16, 17, 18, 19, 20, 21, 22, 23 ແລະ 24 ຈະຖືກປັບໃໝ ດັ່ງນີ້:

1. ການລະເມີດຄັ້ງທີ 1:
   - ປັບໃໝ 20,000,000 ກີບ ສຳລັບບຸກຄະລາກອນ ແລະ 30,000,000 ກີບ ສຳລັບຜູ້ບໍລິຫານ;
   - ປັບໃໝ ແຕ່ 30,000,000 ກີບ ຫາ 500,000,000 ກີບ ສຳລັບ ຫົວໜ່ວຍທີ່ມີໜ້າທີ່ລາຍງານ.
2. ການລະເມີດຄັ້ງທີ 2 ຈະຖືກປັບໃໝ 2 ເທົ່າຂອງມູນຄ່າປັບໃໝຄັ້ງທີ 1;
3. ການລະເມີດຄັ້ງທີ 3 ຈະຖືກປັບໃໝ 3 ເທົ່າຂອງມູນຄ່າການປັບໃໝຄັ້ງທີ 1.

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຫາກບໍ່ສົ່ງບົດລາຍງານທຸລະກຳທີ່ມີມູນຄ່າເກີນກຳນົດ ພາຍໃນວັນທີ 5 ຂອງແຕ່ລະເດືອນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 6 ຂໍ້ 10 ຂອງດຳລັດສະບັບນີ້ ນອກຈາກຈະຖືກປັບໃໝ ຕາມວັກ ໜຶ່ງ ຂອງມາດຕານີ້ ແລ້ວ ຍັງຈະຖືກປັບໃໝ ດັ່ງນີ້:

1. ວັນທີ 6 ຫາ ວັນທີ 10 ຈະຖືກປັບໃໝ 1,000,000 ກີບ ຕໍ່ ວັນ;
2. ວັນທີ 11 ຫາ ວັນທີ 15 ຈະຖືກປັບໃໝ 2,000,000 ກີບ ຕໍ່ ວັນ;
3. ວັນທີ 16 ຫາ ວັນທີ 20 ຈະຖືກປັບໃໝ 5,000,000 ກີບ ຕໍ່ ວັນ;
4. ວັນທີ 21 ຂຶ້ນໄປ ຈະຖືກປັບໃໝ 10,000,000 ກີບ ຕໍ່ ວັນ.

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຫາກມີຂໍ້ສົງໄສ ຫຼື ມີເຫດຜົນພຽງພໍ ໂດຍຜ່ານການພິຈາລະນາ ຂອງພະນັກງານເກັບກຳຂໍ້ມູນ ແລະ ລາຍງານ ວ່າທຸລະກຳຂອງລູກຄ້າ ແມ່ນຜົນຈາກການກະທຳຜິດຕົ້ນ, ພົວພັນ ຫຼື ເຊື່ອມໂຍງກັບການກະທຳຜິດຕົ້ນ, ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແຕ່ບໍ່ລາຍ

ງານໄປຍັງສຳນັກງານຂໍ້ມູນຕ້ານການຟອກເງິນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 6 ຂໍ້ 11 ຂອງດຳລັດສະບັບນີ້ ນອກຈາກຈະຖືກປັບໃໝຕາມວັກ ໜຶ່ງ ຂອງມາດຕານີ້ ຍັງຈະຖືກປັບໃໝ ດັ່ງນີ້:

1. ภายກຳນົດເວລາ 1-5 ວັນ ນັບແຕ່ວັນພົບຄວາມສົງໄສ ຈະຖືກປັບໃໝ 2,000,000 ກີບ ຕໍ່ ວັນ;
2. ภายກຳນົດເວລາ 6-10 ວັນ ນັບແຕ່ວັນພົບຄວາມສົງໄສ ຈະຖືກປັບໃໝ 5,000,000 ກີບ ຕໍ່ ວັນ;
3. ภายກຳນົດເວລາ 11 -15 ວັນ ນັບແຕ່ວັນພົບຄວາມສົງໄສ ຈະຖືກປັບໃໝ 10,000,000 ກີບ ຕໍ່ ວັນ;
4. ภายກຳນົດເວລາ 16 ວັນ ຂຶ້ນໄປ ນັບແຕ່ວັນພົບຄວາມສົງໄສ ຈະຖືກປັບໃໝ 20,000,000 ກີບ ຕໍ່ ວັນ.

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຫາກບໍ່ສະໜອງຂໍ້ມູນເພີ່ມເຕີມກ່ຽວກັບທຸລະກຳທີ່ສົງໄສ ໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ພາຍໃນກຳນົດເວລາຕາມການຮ້ອງຂໍ ນອກຈາກຈະຖືກປັບໃໝ ຕາມວັກ ໜຶ່ງ ຂອງມາດຕານີ້ແລ້ວ ຍັງຈະຖືກປັບໃໝ ດັ່ງນີ້:

1. ภายກຳນົດເວລາ 1-5 ວັນ ນັບແຕ່ວັນທີ່ໄດ້ກຳນົດໃຫ້ສະໜອງຂໍ້ມູນ ຈະຖືກປັບໃໝ 1,000,000 ກີບ ຕໍ່ ວັນ;
2. ภายກຳນົດເວລາ 6-10 ວັນ ນັບແຕ່ວັນທີ່ໄດ້ກຳນົດໃຫ້ສະໜອງຂໍ້ມູນ ຈະຖືກປັບໃໝ 3,000,000 ກີບ ຕໍ່ ວັນ;
3. ภายກຳນົດເວລາ 11-15 ວັນ ນັບແຕ່ວັນທີ່ໄດ້ກຳນົດໃຫ້ສະໜອງຂໍ້ມູນ ຈະຖືກປັບໃໝ 5,000,000 ກີບ ຕໍ່ ວັນ;
4. ภายກຳນົດເວລາ 16 ວັນ ຂຶ້ນໄປ ນັບແຕ່ວັນທີ່ໄດ້ກຳນົດໃຫ້ສະໜອງຂໍ້ມູນ ຈະຖືກປັບໃໝ 10,000,000 ກີບ ຕໍ່ ວັນ.

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຫາກລະເມີດກ່ຽວກັບການນຳໃຊ້ມາດຕະການຊົ່ວຄາວ ທີ່ພົວພັນກັບ ການຟອກເງິນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 6 ຂໍ້ 12 ຂອງດຳລັດສະບັບນີ້ ຈະຖືກປັບໃໝ ດັ່ງນີ້:

1. ການລະເມີດຄັ້ງທີ 1:
   - ປັບໃໝ 30,000,000 ກີບ ສຳລັບບຸກຄະລາກອນ ແລະ 40,000,000 ກີບ ສຳລັບຜູ້ບໍລິຫານ;
   - ປັບໃໝ 50,000,000 ກີບ ຫາ 500,000,000 ກີບ ສຳລັບ ຫົວໜ່ວຍທີ່ມີໜ້າທີ່ລາຍງານ.
2. ການລະເມີດຄັ້ງທີ 2 ຈະຖືກປັບໃໝ 2 ເທົ່າຂອງມູນຄ່າປັບໃໝຄັ້ງທີ 1;
3. ການລະເມີດຄັ້ງທີ 3 ຈະຖືກປັບໃໝ 3 ເທົ່າຂອງມູນຄ່າການປັບໃໝຄັ້ງທີ 1.

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຫາກລະເມີດກ່ຽວກັບການນຳໃຊ້ມາດຕະການຊົ່ວຄາວ ທີ່ພົວພັນກັບ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 6 ຂໍ້ 12 ຂອງດຳລັດສະບັບນີ້ ຈະຖືກປັບໃໝ ດັ່ງນີ້:

1. ຄັ້ງທີ 1 ຈະຖືກປັບໃໝ ແຕ່ 300,000,000 ກີບ ຫາ 500,000,000 ກີບ;
2. ຄັ້ງທີ 2 ຈະຖືກປັບໃໝ 2 ເທົ່າຂອງມູນຄ່າການປັບໃໝຄັ້ງທີ 1;
3. ຄັ້ງທີ 3 ຈະຖືກປັບໃໝ 3 ເທົ່າຂອງມູນຄ່າການປັບໃໝຄັ້ງທີ 1.

**ມາດຕາ 10 ອັດຕາການປັບໃໝ ວິສາຫະກິດໄປສະນີ ແລະ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ**

ວິສາຫະກິດໄປສະນີ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການຕ້ານ ຟອກເງິນ ຕາມທີ່ກຳນົດໄວ້ໃນມາດຕາ 7 ແລະ 8 ຂອງ ດຳລັດສະບັບນີ້ ຈະຖືກປັບໃໝ ດັ່ງນີ້:

1. ການລະເມີດຄັ້ງທີ 1:
   - ປັບໃໝ 30,000,000 ກີບ ສຳລັບບຸກຄະລາກອນ ແລະ 40,000,000 ກີບ ສຳລັບຜູ້ບໍລິຫານ;
   - ປັບໃໝ 50,000,000 ກີບ ຫາ 500,000,000 ກີບ ສຳລັບ ຫົວໜ່ວຍທີ່ມີໜ້າທີ່ລາຍງານ.

2. ການລະເມີດຄັ້ງທີ 2 ຈະຖືກປັບໃໝ 2 ເທົ່າຂອງມູນຄ່າປັບໃໝຄັ້ງທີ 1;
3. ການລະເມີດຄັ້ງທີ 3 ຈະຖືກປັບໃໝ 3 ເທົ່າຂອງມູນຄ່າການປັບໃໝຄັ້ງທີ 1.

ວິສາຫະກິດໄປສະນີ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມທີ່ກໍານົດໄວ້ໃນມາດຕາ 7 ແລະ 8 ຂອງ ດໍາລັດສະບັບນີ້ ຈະຖືກປັບໃໝ ດັ່ງນີ້:

1. ຄັ້ງທີ 1 ຈະຖືກປັບໃໝ ແຕ່ 300,000,000 ກີບ ຫາ 500,000,000 ກີບ;
2. ຄັ້ງທີ 2 ຈະຖືກປັບໃໝ 2 ເທົ່າຂອງມູນຄ່າການປັບໃໝຄັ້ງທີ 1;
3. ຄັ້ງທີ 3 ຈະຖືກປັບໃໝ 3 ເທົ່າຂອງມູນຄ່າການປັບໃໝຄັ້ງທີ 1.

## ໝວດທີ 3
## ການປັບໃໝ ຕໍ່ຜູ້ລະເມີດລະບຽບການກ່ຽວກັບ ການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທໍາລາຍລ້າງຜານ

### ມາດຕາ 11 ການລະເມີດຂອງ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ວິສາຫະກິດໄປສະນີ

ການລະເມີດຂອງ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ວິສາຫະກິດໄປສະນີ ກ່ຽວກັບການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທໍາລາຍລ້າງຜານ ມີ ດັ່ງນີ້:

1. ບໍ່ກວດກາລູກຄ້າຂອງຕົນ;
2. ບໍ່ລາຍງານການ ກວດພົບ, ພົບເຫັນ ຫຼື ທຸລະກໍາທີ່ສົງໄສ;
3. ບໍ່ນໍາໃຊ້ມາດຕະການຊົ່ວຄາວ;
4. ພົວພັນກັບ ທະນາຄານ ຫຼື ສະຖາບັນການເງິນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ບໍ່ມີຕົວຕົນ;
5. ພົວພັນກັບທະນາຄານຢູ່ປະເທດ ທີ່ບໍ່ມີນິຕິກໍາກ່ຽວກັບ ການຕ້ານການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທໍາລາຍລ້າງຜານ;
6. ເຮັດ ທຸລະກິດ ຫຼື ທຸລະກໍາ ກັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ ຕາມຍັດຕິຂອງສະພາຄວາມໝັ້ນຄົງອົງການສະຫະປະຊາຊາດ.

### ມາດຕາ 12 ການລະເມີດຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ

ການລະເມີດຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບການຕ້ານ ການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທໍາລາຍລ້າງຜານ ມີ ດັ່ງນີ້:

1. ບໍ່ລາຍງານການພົບເຫັນການເຄື່ອນໄຫວຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ ຫຼື ຜູ້ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທໍາລາຍລ້າງຜານ;
2. ບໍ່ຢຸດຕິການເຄື່ອນໄຫວຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ ຫຼື ຜູ້ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທໍາລາຍລ້າງຜານ;
3. ເຂົ້າຮ່ວມ ຫຼື ໃຫ້ການຊ່ວຍເຫຼືອ ແກ່ຜູ້ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທໍາລາຍລ້າງຜານ;
4. ພົວພັນກັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ໃນບັນຊີລາຍຊື່ ຫຼື ຜູ້ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທໍາລາຍລ້າງຜານ;
5. ພົວພັນກັບ ທຶນ ຫຼື ຊັບສິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ ຫຼື ຜູ້ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທໍາລາຍລ້າງຜານ;
6. ເຄື່ອນໄຫວ ຫຼື ດໍາເນີນການ ກ່ຽວກັບທຶນ ໂດຍທີ່ຮູ້ວ່າ ທຶນນັ້ນ ແມ່ນໃຜເປັນເຈົ້າຂອງ, ຖືກຄວບຄຸມ ຫຼື ຖືກຄອບຄອງ ທາງກົງ ຫຼື ທາງອ້ອມ, ທັງໝົດ ຫຼື ບາງສ່ວນ ຫຼື ກະທໍາໃນນາມ ຫຼື ຕາມຄໍາສັ່ງຂອງ ບຸກຄົນ,

ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຖືກກຳນົດໃນບັນຊີລາຍຊື່ ຜູ້ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ;

7. ເຮັດໃຫ້ ທຶນ ຫຼື ຊັບສິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ ຫຼື ຜູ້ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ປ່ຽນຮູບ, ພ້ອມນຳໃຊ້ ໂດຍທາງກົງ ຫຼື ທາງອ້ອມ, ທັງໝົດ ຫຼື ບາງສ່ວນ;

8. ບໍ່ ກັກ ຫຼື ລະງັບ ທຶນ ທີ່ສະໜອງໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ;

9. ບໍ່ ລາຍງານ ການພົບເຫັນ ຫຼື ສິ່ງໄສທຸລະກຳ ຫຼື ການເຄື່ອນໄຫວ ທີ່ກ່ຽວຂ້ອງກັບການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ.

**ມາດຕາ 13 ອັດຕາການປັບໃໝ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫາກລະເມີດລະບຽບການ ກ່ຽວກັບການຕ້ານ ການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ຈະຖືກປັບໃໝ ດັ່ງນີ້:

1. ຄັ້ງທີ 1 ຈະຖືກປັບໃໝ ແຕ່ 300,000,000 ກີບ ຫາ 500,000,000 ກີບ;
2. ຄັ້ງທີ 2 ຈະຖືກປັບໃໝ 2 ເທົ່າຂອງມູນຄ່າການປັບໃໝຄັ້ງທີ 1;
3. ຄັ້ງທີ 3 ຈະຖືກປັບໃໝ 3 ເທົ່າຂອງມູນຄ່າການປັບໃໝຄັ້ງທີ 1.

## ໝວດທີ 4
## ມາດຕະການອື່ນ ຕໍ່ຜູ້ລະເມີດ
## ກົດໝາຍ ແລະ ລະບຽບການ ກ່ຽວກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ

**ມາດຕາ 14 ມາດຕະການອື່ນ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ ທີ່ໄດ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ ນອກຈາກຖືກປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນໝວດທີ 2 ແລະ 3 ຂອງດຳລັດສະບັບນີ້ແລ້ວ ຍັງຈະຖືກກ່າວເຕືອນ, ໂຈະການນຳໃຊ້, ຍຸບເລີກ ແລະ ລຶບລ້າງ ໃບທະບຽນວິສາຫະກິດ, ໂຈະການເຄື່ອນໄຫວທຸລະກິດ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ.

**ມາດຕາ 15 ການກ່າວເຕືອນ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫາກໄດ້ລະເມີດດຳລັດສະບັບນີ້ ທີ່ບໍ່ສົ່ງຜົນກະທົບ ແລະ ສ້າງຄວາມເສຍຫາຍ ແລະ ບໍ່ເປັນການກະທຳຜິດທາງອາຍາ ຈະຖືກກ່າວເຕືອນ.

**ມາດຕາ 16 ການ ໂຈະການນຳໃຊ້, ຍຸບເລີກ ແລະ ລຶບລ້າງໃບທະບຽນ ວິສາຫະກິດ, ໂຈະການເຄື່ອນໄຫວທຸລະກິດ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ ທີ່ໄດ້ຖືກປະຕິບັດມາດຕະການປັບໃໝ ແຕ່ຍັງສືບຕໍ່ລະເມີດ ຈະຖືກ ໂຈະການນຳໃຊ້, ຍຸບເລີກ ແລະ ລຶບລ້າງໃບທະບຽນ ວິສາຫະກິດ, ໂຈະການເຄື່ອນໄຫວທຸລະກິດ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ພ້ອມທັງສົ່ງໃຫ້ອົງການທີ່ມີສິດອຳນາດພິຈາລະນາ.

ການ ໂຈະການນຳໃຊ້, ຍຸບເລີກ ແລະ ລຶບລ້າງໃບທະບຽນ ວິສາຫະກິດ, ໂຈະການເຄື່ອນໄຫວທຸລະກິດ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 5
## ການຈັດຕັ້ງປະຕິບັດ ການປັບໃໝ ແລະ ມາດຕະການອື່ນ

### ມາດຕາ 17 ອົງການຈັດຕັ້ງປະຕິບັດ ການປັບໃໝ ແລະ ມາດຕະການອື່ນ

ອົງການຈັດຕັ້ງປະຕິບັດ ການປັບໃໝ ແລະ ມາດຕະການອື່ນ ຕໍ່ຜູ້ລະເມີດ ມີດັ່ງນີ້:

1. ທະນາຄານ ແຫ່ງ ສປປ ລາວ;
2. ສຳນັກງານຂໍ້ມູນຕ້ານການຟອກເງິນ;
3. ອົງການຄຸ້ມຄອງ ຫົວໜ່ວຍທີ່ມີໜ້າທີ່ລາຍງານອື່ນ ແລະ ວິສາຫະກິດໄປສະນີ.

### ມາດຕາ 18 ສິດ ແລະ ໜ້າທີ່ ຂອງທະນາຄານ ແຫ່ງ ສປປ ລາວ

ສິດ ແລະ ໜ້າທີ່ ຂອງທະນາຄານ ແຫ່ງ ສປປ ລາວ ມີ ດັ່ງນີ້:

1. ຄົ້ນຄວ້າສ້າງລະບຽບການ ກ່ຽວກັບວຽກງານປັບໃໝ ແລະ ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ;
2. ໂຈະການດຳເນີນທຸລະກິດ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ຂອງ ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ, ຜູ້ໃຫ້ບໍລິການຊຳລະເງິນ ແລະ ຜູ້ໃຫ້ບໍລິການ ຊື້ ຂາຍ ຊັບສິນເໝືອນຈິງ ຕາມການສະເໜີຂອງ ສຳນັກງານຂໍ້ມູນຕ້ານການຟອກເງິນ;
3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 19 ສິດ ແລະ ໜ້າທີ່ ຂອງສຳນັກງານຂໍ້ມູນຕ້ານການຟອກເງິນ

ສິດ ແລະ ໜ້າທີ່ ຂອງສຳນັກງານຂໍ້ມູນຕ້ານການຟອກເງິນ ມີ ດັ່ງນີ້:

1. ຕິດຕາມ ກວດກາ ແລະ ປັບໃໝ, ກ່າວເຕືອນ, ສະເໜີ ໂຈະການດຳເນີນທຸລະກິດ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ເກັບກຳຂໍ້ມູນ ແລະ ສະຖິຕິ ກ່ຽວກັບການ ປັບໃໝ, ກ່າວເຕືອນ, ການສະເໜີ ໂຈະການດຳເນີນທຸລະກິດ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ;
3. ສະຫຼຸບ ແລະ ລາຍງານ ກ່ຽວກັບການ ປັບໃໝ, ກ່າວເຕືອນ, ການສະເໜີ ໂຈະການດຳເນີນທຸລະກິດ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ ຕໍ່ຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢ່າງເປັນປົກກະຕິ;
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 20 ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງ ຫົວໜ່ວຍທີ່ມີໜ້າທີ່ລາຍງານອື່ນ ແລະ ວິສາຫະກິດໄປສະນີ

ອົງການຄຸ້ມຄອງ ຫົວໜ່ວຍທີ່ມີໜ້າທີ່ລາຍງານອື່ນ ແລະ ວິສາຫະກິດໄປສະນີ ມີ ສິດ ແລະ ໜ້າທີ່ ໃນການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ປັບໃໝ, ກ່າວເຕືອນ, ໂຈະການດຳເນີນທຸລະກິດ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ຂອງ ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ແລະ ກອງທຶນເພື່ອການລົງທຶນ;

2. ກະຊວງການເງິນ ປັບໃໝ, ກ່າວເຕືອນ, ໂຈະການດຳເນີນທຸລະກິດ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ຂອງ ບໍລິສັດປະກັນໄພ, ວິສາຫະກິດບັນຊີ, ວິສາຫະກິດກວດສອບ ແລະ ກາຊີໂນ;

3. ກະຊວງອຸດສາຫະກຳ ແລະ ການຄ້າ ປັບໃໝ, ກ່າວເຕືອນ, ໂຈະການດຳເນີນທຸລະກິດ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ຂອງ ຜູ້ດຳເນີນທຸລະກິດ ຊື້ ຂາຍ ວັດຖຸມີຄ່າ;

4. ກະຊວງກະສິກຳ ແລະ ສິ່ງແວດລ້ອມ ປັບໃໝ, ກ່າວເຕືອນ, ໂຈະການດຳເນີນທຸລະກິດ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ຂອງ ຜູ້ດຳເນີນທຸລະກິດ ຊື້ ຂາຍ ອະສັງຫາລິມະຊັບ;

5. ກະຊວງຍຸຕິທຳ ປັບໃໝ, ກ່າວເຕືອນ, ໂຈະການດຳເນີນທຸລະກິດ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ຂອງ ວິສາຫະກິດກົດໝາຍ ແລະ ລຶບຊື່ອອກຈາກການເປັນທະນາຍຄວາມ;

6. ກະຊວງເຕັກໂນໂລຊີ ແລະ ການສື່ສານ ປັບໃໝ, ກ່າວເຕືອນ, ໂຈະການດຳເນີນທຸລະກິດ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ຂອງ ວິສາຫະກິດໄປສະນີ.

ອົງການຄຸ້ມຄອງ ຫົວໜ່ວຍທີ່ມີໜ້າທີ່ລາຍງານອື່ນ ແລະ ວິສາຫະກິດໄປສະນີ ຕ້ອງເກັບກຳຂໍ້ມູນ ສະຖິຕິ, ແຈ້ງຂໍ້ມູນ ແລະ ສະຖິຕິ ກ່ຽວກັບການ ປັບໃໝ, ກ່າວເຕືອນ, ໂຈະການດຳເນີນທຸລະກິດ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

## ໝວດທີ 6
## ການຊຳລະ, ການແບ່ງ ແລະ ການນຳໃຊ້ ເງິນທີ່ໄດ້ມາຈາກການປັບໃໝ

### ມາດຕາ 21 ການຊຳລະເງິນຄ່າປັບໃໝ

ຫົວໜ່ວຍທີ່ມີໜ້າລາຍງານ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ ຕ້ອງຊຳລະເງິນຄ່າປັບໃໝ ໃຫ້ອົງການຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ຜ່ານລະບົບ ທະນາຄານທຸລະກິດ ແລະ ຈຸດບໍລິການທີ່ລັດໄດ້ກຳນົດ ພາຍໃນ 10 ວັນລັດຖະການ ນັບແຕ່ວັນທີ່ແຈ້ງການນຳໃຊ້ມາດຕະການເປັນຕົ້ນໄປ.

### ມາດຕາ 22 ການແບ່ງເງິນປັບໃໝ

ເງິນ ທີ່ໄດ້ຈາກການປັບໃໝຕາມດຳລັດສະບັບນີ້ ສາມສິບສ່ວນຮ້ອຍ (30%) ໃຫ້ມອບເຂົ້າງົບປະມານແຫ່ງລັດ, ສ່ວນເງິນທີ່ເຫຼືອ ເຈັດສິບສ່ວນຮ້ອຍ (70%) ແມ່ນມອບເຂົ້າກອງທຶນຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ ເພື່ອນຳໃຊ້ເຂົ້າໃນວຽກງານດັ່ງກ່າວ.

ສຳລັບລາຍລະອຽດກ່ຽວກັບການຄຸ້ມຄອງກອງທຶນຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 23 ການນຳໃຊ້ເງິນທີ່ໄດ້ຈາກການປັບໃໝ

ເງິນທີ່ໄດ້ຈາກການປັບໃໝ ໃຫ້ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ສ້າງ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ;

2. ໂຄສະນາເຜີຍແຜ່ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ;

3. ຝຶກອົບຮົມ ແລະ ຍົກລະດັບ ໃຫ້ບຸກຄະລາກອນທີ່ພົວພັນກັບວຽກງານການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ;

4. ຕິດຕາມ ກວດກາ ແລະ ຈັດຕັ້ງປະຕິບັດວຽກງານກ່ຽວກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ;

5. ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ໃນການປະຕິບັດໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ;

6. ຈັດຊື້ ວັດຖຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ທີ່ນຳໃຊ້ເຂົ້າໃນວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ;

7. ວຽກງານອື່ນ ທີ່ກ່ຽວຂ້ອງກັບ ວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ ແລະ ການແຜ່ຜາຍອາວຸດທຳລາຍລ້າງຜານ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 24 ການຈັດຕັ້ງປະຕິບັດ**

ອົງການຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ເປັນເຈົ້າການໃນການຈັດຕັ້ງດຳລັດສະບັບນີ້.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 25 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 04 ພະຈິກ 2025 ເປັນຕົ້ນໄປ.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ສອນໄຊ ສີພັນດອນ